**ມິຊຊາອາທິດທີ 7 ກຳນົດທຳມະດາ ປີ A**

**ວັນທີ 23 ກຸມພາ 2020**



**ພຣະວໍລະສານໂດຍນັກບຸນມັດເທວ 5, 38-48**

ໃນເວລານັ້ນ, ພຣະເຢຊູເຈົ້າຊົງກ່າວແກ່ພວກສາວົກວ່າ: "ພວກເຈົ້າກໍເຄີຍໄດ້ຍິນຄຳກ່າວວ່າ: "ຕາແທນຕາ, ແຂ້ວແທນແຂ້ວ". ສ່ວນເຮົາ, ເຮົາບອກພວກເຈົ້າວ່າ: "ຢ່າຂັດສູ້ຄົນຊົ່ວ. ແຕ່ວ່າຫາກໃຜຕົບແກ້ມຂວາຂອງເຈົ້າ ກໍຈົ່ງປິ່ນແກ້ມຊ້າຍໃຫ້ເຂົາຕົບອີກ. ຖ້າຜູ້ໃດຟ້ອງຕໍ່ສານຢາກໄດ້ເສື້ອຊັ້ນໃນຂອງເຈົ້າ ກໍຈົ່ງແກ້ເສື້ອຊັ້ນນອກຕື່ມໃຫ້ເຂົາອີກ. ແລະຜູ້ໃດເກນເຈົ້າໃຫ້ຍ່າງໄປນຳເຂົາຫລັກໜຶ່ງ ກໍຈົ່ງຍ່າງນຳເຂົາຮອດສອງຫລັກ. ຜູ້ໃດຂໍຫຍັງກໍຈົ່ງໃຫ້ເຂົາ ແລະຢ່າປິ່ນຫລັງໃສ່ຜູ້ມາຂໍຢືມນຳເຈົ້າເປັນອັນຂາດ.

ພວກເຈົ້າຍັງເຄີຍໄດ້ຍິນຄຳກ່າວວ່າ: "ຈົ່ງຮັກເພື່ອນບ້ານຂອງເຈົ້າ ແລະຈົ່ງກຽດຊັງສັດຕູຂອງເຈົ້າ". ສ່ວນເຮົາ, ເຮົາບອກພວກເຈົ້າວ່າ: "ຈົ່ງຮັກສັດຕູແລະຈົ່ງພາວະນາອຸທິດໃຫ້ຄົນທີ່ບັງບຽດພວກເຈົ້າ ເພື່ອໃຫ້ພວກເຈົ້າຈະໄດ້ເປັນບຸດຂອງພຣະບິດາເຈົ້າສະຫວັນ, ຜູ້ໂຜດໃຫ້ດວງຕາເວັນຂອງພຣະອົງສ່ອງແສງໃຫ້ທັງຄົນດີແລະຄົນຊົ່ວ; ແລະໂຜດໃຫ້ຝົນຕົກຣວາຍຣຳທັງຄົນຊອບທຳແລະຄົນອະທຳ. ຖ້າພວກເຈົ້າຮັກແຕ່ຄົນທີ່ຮັກພວກເຈົ້າ, ພວກເຈົ້າຈະໄດ້ຮັບບຳເໜັດລາງວັນຫຍັງ? ບັນດາຄົນເກັບສ່ວຍທັງຫລາຍກໍບໍ່ທຳຢ່າງດຽວກັນນີ້ບໍ? ແລະຖ້າພວກເຈົ້າຄຳນັບແຕ່ພວກພີ່ນ້ອງຂອງພວກເຈົ້າເທົ່ານັ້ນ, ພວກເຈົ້າກະທຳອັນໃດລື່ນເຂົາແດ່? ຄົນຕ່າງສາດສະໜາກໍບໍ່ທຳຢ່າງດຽວກັນນີ້ບໍ?

ດັ່ງນັ້ນ, ພວກເຈົ້າຈົ່ງເປັນຜູ້ດີບໍລິບູນ ເໝືອນພຣະບິດາເຈົ້າສະຫວັນຊົງເປັນຜູ້ດີບໍລິບູນນັ້ນເຖີດ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 5, 38-48**

ໃນບົດອ່ານທີໜຶ່ງຂອງວັນນີ້ຊຶ່ງມາຈາກໜັງສືສັງຄະວິໄນ (ຫລືໜັງສືຂອງພວກເລວີ) ພຣະເຈົ້າໄດ້ໄຂສຳແດງຄວາມສັກສິດຂອງພຣະອົງໃຫ້ປະຊາກອນຂອງພຣະອົງຮູ້ຜ່ານທາງໂມແຊ. ແລະໃນເວລາດຽວກັນພຣະອົງກໍຊົງຮຽກເອີ້ນປະຊາກອນຂອງພຣະອົງໃຫ້ເປັນເໝືອນພຣະອົງຄືກາຍເປັນຜູ້ສັກສິດ. ແຕ່ເຮັດແນວໃດພວກເຮົາຈຶ່ງຈະເປັນຜູ້ສັກສິດໄດ້? ພວກເຮົາຈະເປັນຜູ້ສັກສິດໄດ້ກໍຕໍ່ເມື່ອພວກເຮົາປະຕິບັດຕາມພຣະທຳບັນຍັດຂອງພຣະເຈົ້າ. ແລະເປັນຕົ້ນພຣະບັນຍັດເອກຂອງພຣະເຈົ້າຄືບັນຍັດແຫ່ງຮັກນັ້ນເອງ. ດັ່ງທີ່ພຣະອົງກ່າວໃນໜັງສືສັງຄະວິໄນວ່າ: *"ຈົ່ງຮັກເພື່ອນບ້ານຄືຮັກຕົວເຈົ້າເອງ"*. ຍ້ອນຫຍັງ? ຍ້ອນວ່າພວກເຮົາແຕ່ລະຄົນລ້ວນແຕ່ເປັນວິຫານຂອງພຣະເຈົ້າ ແລະພຣະຈິດຂອງພຣະເຈົ້າກໍສະຖິດຢູ່ໃນຕົວພວກເຮົາ ດັ່ງທີ່ນັກບຸນເປົາໂລໄດ້ເທດສອນຊາວໂກຣິນໂທໃນບົດອ່ານທີສອງວັນນີ້. ຖ້າພວກເຮົາຄຽດຊັງຫລືທຳຮ້າຍຄົນອື່ນ ພວກເຮົາກໍຄຽດຊັງແລະທຳຮ້າຍວິຫານຂອງພຣະເຈົ້າ. ຫລືເວົ້າອີກຢ່າງ, ພວກເຮົາກໍທຳຮ້າຍພຣະເຈົ້ານັ້ນເອງ. ໃນບັນຍັດແຫ່ງຮັກຂອງພຣະເຈົ້າສອນພວກເຮົາໃຫ້ຮັກພຣະເຈົ້າຜ່ານທາງເພື່ອນພີ່ນ້ອງຂອງພວກເຮົາ.

ພຣະບັນຍັດແຫ່ງຮັກຂອງພຣະເຈົ້າໃນພັນທະສັນຍາເກົ່າໄດ້ເປັນຈິງແລະສົມບູນໃນຄຳເທດສອນຂອງພຣະເຢຊູເຈົ້າແລະໃນຕົວຂອງພຣະອົງໃນພັນທະສັນຍາໃໝ່, ເປັນຕົ້ນໃນບົດເທດບົນພູເຂົາ. ແລະໂດຍສະເພາະໃນການສະລະຊີວິດຂອງພຣະອົງບົນໄມ້ກາງເຂນຢູ່ບົນພູເຂົາໂກນໂກທາເພື່ອພວກເຮົາ.

ວັນນີ້, ພຣະເຢຊູເຈົ້າກໍກ່າວກັບສາວົກຂອງພຣະອົງວ່າ: *"ພວກເຈົ້າເຄີຍໄດ້ຍິນຄຳວ່າ: ຈົ່ງຮັກເພື່ອນບ້ານຂອງເຈົ້າ ແລະຈົ່ງຄຽດຊັງສັດຕູຂອງເຈົ້າ"*. ສ່ວນເຮົາ, ເຮົາບອກພວກເຈົ້າວ່າ: *"ຈົ່ງຮັກສັດຕູແລະຈົ່ງພາວະນາອຸທິດໃຫ້ຄົນທີ່ບັງບຽດພວກເຈົ້າ"*. ຄຳເທດສອນແຫ່ງຮັກຂອງພຣະເຢຊູເຈົ້າໃນທີ່ນີ້ທຳໃຫ້ພວກເຮົາເຫັນວ່າ ພຣະອົງບໍ່ໄດ້ຈຳກັດຂອບເຂດຂອງຄວາມຮັກ. ຫລືເວົ້າອີກຢ່າງ, ພຣະເຢຊູເຈົ້າບໍ່ໄດ້ສອນພວກເຮົາໃຫ້ຮັກຄົນອື່ນແບບພາສາມະນຸດ, ແຕ່ພຣະອົງສອນພວກເຮົາໃຫ້ຮັກຄົນອື່ນເໝືອນກັບພຣະບິດາເຈົ້າຜູ້ສະຖິດຢູ່ສະຫວັນທີ່ຮັກພວກເຮົາແຕ່ລະຄົນບໍ່ວ່າຈະເປັນຄົນດີ ຫລືຄົນຊົ່ວ, ຄົນຊອບທຳ ຫລືຄົນອະທຳ. ເພາະທຸກຄົນລ້ວນແຕ່ມີຄຸນຄ່າແລະເທົ່າທຽມກັນຕໍ່ໜ້າພຣະເຈົ້າ. ດັ່ງນັ້ນ, ຖ້າພວກເຮົາຮັກແຕ່ຄົນທີ່ຮັກພວກເຮົາ, ຫລືພວກເຮົາຮັກແຕ່ຄົນໃນເຊື້ອວົງຍາດຕິພີ່ນ້ອງຂອງພວກເຮົາເທົ່ານັ້ນ, ການກະທຳຂອງພວກເຮົາກໍບໍ່ໄດ້ແຕກຕ່າງຫຍັງກັບຄົນທີ່ບໍ່ຮູ້ຈັກພຣະເຈົ້າ. ກົງກັນຂ້າມ, ຖ້າພວກເຮົາຮັກຄົນທີ່ພວກເຮົາບໍ່ຮູ້ຈັກ, ຄົນທີ່ຄຽດຊັງ, ບຽດບຽນແລະທຳຮ້າຍພວກເຮົາ, ຄວາມຮັກຂອງພວກເຮົາກໍເປັນເໝືອນຄວາມຮັກຂອງພຣະບິດາເຈົ້າສະຫວັນທີ່ຮັກພວກເຮົາເຖິງວ່າພວກເຮົາໄດ້ກະທຳຜິດແລະຍັງສືບຕໍ່ທຳບາບຜິດຕໍ່ພຣະອົງ.

ຄຳຖາມທີ່ຕາມມາກໍຄືເຮັດແນວໃດພວກເຮົາຈຶ່ງສາມາດຮັກຄົນທີ່ຄຽດຊັງ, ບຽດບຽນແລະທຳຮ້າຍພວກເຮົາໄດ້? ຄຳສອນຂອງພຣະເຢຊູເຈົ້າປະການນີ້ບໍ່ຍາກເກີນໄປສຳລັບພວກເຮົາບໍ? ແນ່ນອນ, ຖ້າພວກເຮົາອາໄສຄວາມສາມາດແລະຄວາມພະຍາມຂອງມະນຸດ ພວກເຮົາກໍບໍ່ສາມາດຮັກແພງສັດຕູຂອງພວກເຮົາໄດ້. ແຕ່ຖ້າພວກເຮົາອາໄສພຣະຄຸນຂອງພຣະເຈົ້າຊ່ວຍເພື່ອໃຫ້ພວກເຮົາສຳນຶກໄດ້ວ່າ ຖ້າພວກເຮົາຢາກໃຫ້ພຣະເຈົ້າຮັກພວກເຮົາ, ພວກເຮົາກໍຕ້ອງຮູ້ຈັກຮັກຄົນອື່ນເຊັ່ນດຽວກັນ. ຖ້າພວກເຮົາຢາກໃຫ້ພຣະເຈົ້າຍົກໂທດໂຜດຜິດໃຫ້ພວກເຮົາ, ພວກເຮົາກໍຕ້ອງຍົກໂທດໂຜດຜິດໃຫ້ຄົນອື່ນ. ດັ່ງທີ່ພວກເຮົາວອນຂໍພຣະເຈົ້າທຸກຄັ້ງເມື່ອພວກເຮົາສວດບົດໂອພຣະບິດາຂອງຂ້າພະເຈົ້າທັງຫລາຍນັ້ນເອງ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ